**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-------------------------------------

ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ
ສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ

ເລກທີ 45/ສອລຍ-7
ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2024

## ຂໍ້ຕົກລົງ

ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບຈັດການເລືອກຕັ້ງ

ຄະນະບໍລິຫານງານ ສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ຊຸດທີ VIII

ປະທານ ສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ຕົກລົງ:

ມາດຕາ 1: ແຕ່ງຕັ້ງ ຄະນະຮັບຜິດຊອບຈັດການເລືອກຕັ້ງ ຄະນະບໍລິຫານງານ ສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ຊຸດທີ VIII ມີລາຍລະອຽດດັ່ງລຸ່ມນີ້:

1) ທ່ານ ປັນຍາ ຈັນທະວົງ — ກຳມະການ ສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ, ປະທານສະມາຄົມ ຊຸດທີ III ແລະ VI, ເປັນຫົວໜ້າ
2) ທ່ານ ບັນດາໄຊ ລໍວັນໄຊ — ປະທານສະມາຄົມ ຊຸດທີ VII, ເປັນຮອງຫົວໜ້າ ແລະ ຜູ້ປະຈຳການ
3) ທ່ານນາງ ປາລິມາ ເພັດສິລິແສງ — ປະທານສະມາຄົມ ຊຸດທີ II, ເປັນຄະນະ
4) ທ່ານ ຈັນຊະນະ ສີຈັນທອງທິບ — ປະທານສະມາຄົມ ຊຸດທີ IV, ເປັນຄະນະ

ມາດຕາ 2: ໜ້າທີ່ຂອງຄະນະຮັບຜິດຊອບ ຕາມມາດຕາ 1 ມີລາຍລະອຽດດັ່ງລຸ່ມນີ້:

1) ກຳນົດລະບຽບການ ແລະ ວິທີການລະອຽດ ໃນການປ່ອນບັດ ຕາມລະບຽບ ແລະ ຫຼັກການລວມ;
2) ກະກຽມເອກະສານ, ອຸປະກອນ ແລະ ເຄື່ອງມືທີ່ຈຳເປັນໃນການປ່ອນບັດ;
3) ປະສານງານກັບບຸກຄະລາກອນລົງສະໝັກເລືອກຕັ້ງ ແລະ ສະມາຊິກຂອງສະມາຄົມ ເພື່ອດຳເນີນການປ່ອນບັດລົງຄະແນນສຽງ ຫຼື ການທາບທາມ ໃຫ້ສຳເລັດພາຍເດືອນເມສາ 2024 ໃນຮູບແບບອອນລາຍ;
4) ປະກາດຜົນການເລືອກຕັ້ງ ໃຫ້ສະມາຊິກໄດ້ຮັບຊາບ ພາຍໃນເດືອນພຶດສະພາ 2024;
5) ສົມທົບກັບ ບັນດາທ່ານ ຜູ້ໄດ້ຮັບການເລືອກຕັ້ງ ເປັນຄະນະບໍລິຫານງານຊຸດທີ VIII ເພື່ອດຳເນີນການຂໍອະນຸມັດແຕ່ງຕັ້ງ ຢ່າງເປັນທາງການຈາກຂັ້ນເທິງ.

ມາດຕາ 3: ມອບໃຫ້ຄະນະຮັບຜິດຊອບຕາມມາດຕາ 1 ປະຕິບັດໜ້າທີ່ຢ່າງເຂັ້ມງວດ, ໂປ່ງໃສ ແລະ ມີຫຼັກການ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ, ແລະ ປ່ຽນແທນ ຂໍຕົກລົງ ເລກທີ 41/ສອລຍ-7 ລົງວັນທີ 12/04/2024.

ປະທານສະມາຄົມອະດີດນັກສຶກສາລາວຈາກປະເທດຍີ່ປຸ່ນ

Bandaxay

ບັນດາໄຊ ລໍວັນໄຊ